ໂຄງການ IMPACT Biz

# ເຝິກອົບຮົມກ່ຽວກັບມາດຕະຖານສາກົນ ເພື່ອການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ

19-21 ຕຸລາ 2022

## ບົດຂ່າວ

## ຄວາມທະເຍີທະຍານຈາກພາຍໃນສູ່ສາກົນ: ອົງການ UNDP ຈັດເຝິກອົບຮົມກ່ຽວກັບຫຼັກການໃນການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບໃຫ້ແກ່ 80 ບໍລິສັດ



ພາບຖ່າຍລວມຂອງບັນຍາກາດການເຝິກອົບຮົມໃຫ້ແກ່ລັດວິສາຫະກິດກ່ຽວກັບມາດຕະຖານສາກົນໃນການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ.

**ຮູບຖ່າຍໂດຍ:** ໂອລິເວຍ ມາຄຣີ, ອົງການ UNDP ປະຈຳ ສປປ ລາວ

**ນະຄອນຫຼວງວຽງຈັນ, ວັນທີ 21 ຕຸລາ 2022** – ກິດຈະກຳ ສູນການຝຶກອົບຮົມເຄື່ອນທີ່ເພື່ອການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ໄດ້ສຳເລັດການເຝິກອົບຮົມກ່ຽວກັບມາດຕະຖານສາກົນໃນການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບໃຫ້ແກ່ 80 ບໍລິສັດທີ່ດຳເນີນງານໃນ ສປປ ລາວ.

ໃນປີທີ່ຜ່ານມາ, ໄດ້ເກີດມີການສົນທະນາຢ່າງດຸເດືອດເຖິງຜົນກະທົບຂອງບັນດາຫົວໜ່ວຍທຸລະກິດໃນການປັບແປງສະພາບການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ. ໃນປັດຈະບັນ, ບັນດາທຸລະກິດໄດ້ເປັນສ່ວນໜຶ່ງໃນການຂັບເຄື່ອນການຂະຫຍາຍຕົວຂອງເສດຖະກິດ ໂດຍການສ້າງຜະລິດຕະພັນທີ່ສາມາດປ່ຽນແປງຊີວິດມະນຸດ ແລະ ມີການສົ່ງເສີມທາງການເງິນໂດຍການຈ່າຍພາສີອາກອນໃຫ້ພາກລັດ. ແຕ່ໃນທາງກົບກັນ, ບັນດາທຸລະກິດບາງ

ຈຳນວນກໍ່ໄດ້ຖືກວິຈານວ່າ ຍັງມີການສົ່ງເສີມການບໍລິໂພກທີ່ເກີນຈຳນວນ, ການທຳລາຍຊັບພະຍາກອນທຳມະຊາດ ແລະ ການໃຫ້ຄວາມສຳຄັນຕໍ່ກຳໄລຫຼາຍກວ່າການເປັນຢູ່ຂອງພະນັກງານຢູ່.

ບັນດາຊຸມຊົນ, ອົງການຈັດຕັ້ງສັງຄົມ, ແລະ ອົງການກຳມະບານທົ່ວໂລກແມ່ນໄດ້ຮຽກຮ້ອງໃຫ້ບັນດາທຸລະກິດຫຼຸດຜ່ອນຜົນກະທົບທາງດ້ານລົບ ແລະ ສ້າງຜົນລັບທີ່ດີໃຫ້ແກ່ສັງຄົມໃຫ້ຫຼາຍທີ່ສຸດ. ນັກລົງທຶນໃນປັດຈຸບັນເລີ່ມຫັນມາໃຫ້ຄວາມສົນໃຈກ່ຽວກັບການປະພຶດຢ່າງມີຄວາມຮັບຜິດຊອບຂອງບໍລິສັດຕໍ່ກັບສັງຄົມ ແລະ ສິ່ງແວດລ້ອມຫຼາຍຂຶ້ນ. ໃນຂະນະດຽວກັນນັ້ນ ລັດຖະບານຂອງຫຼາຍປະເທດແມ່ນໄດ້ເລີ່ມອອກກົດໝາຍ ແລະ ກົດລະບຽບເພື່ອຄວບຄຸມຜົນກະທົບທາງລົບດ້ານສັງຄົມ ແລະ ສິ່ງແວດລ້ອມທີ່ກໍ່ຂຶ້ນໂດຍບັນດາທຸລະກິດ.

ທ່ານ ນາງ ແຄັດເທີຣີນ ຟົງ, ຮອງຜູ້ຕາງໜ້າອົງການ UNDP ປະຈຳລາວໄດ້ກ່າວວ່າ: "ພວກເຮົາໄດ້ເຫັນຄວາມກົດດັນທີ່ເພີ່ມຂຶ້ນແກ່ບັນດາທຸລະກິດທີ່ສົ່ງຜົນກະທົບໃຫ້ແກ່ປະຊາຊົນ ແລະ ສິ່ງແວດລ້ອມ ແລະ ຕ້ອງໃຫ້ມີມາດຕະການປ້ອງກັນຜົນກະທົບດັ່ງກ່າວ. ໃນນັ້ນ, ບັນດາບໍລິສັດຕ້ອງໄດ້ເຮັດຫຼາຍກວ່າການປະຕິບັດຕາມພັນທະກົດໝາຍພາຍໃນປະເທດ ແລະ ຕ້ອງປັບປຸງການດຳເນີນງານຂອງພວກເຂົາໂດຍອີງຕາມມາດຕະຖານສາກົນເພື່ອການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ເຊິ່ງລວມມີ ມາດຕະຖານສາກົນວ່າດ້ວຍແຮງງານ ແລະ ມາດຕະຖານສາກົນວ່າດ້ວຍສິດທິມະນຸດ".

ບັນດາບໍລິສັດທີ່ໄດ້ເຂົ້າຮ່ວມການເຝິກອົບຮົມ ແມ່ນໄດ້ຮຽນຮູ້ເຖິງຄວາມສຳຄັນວ່າເປັນຫຍັງຈຶ່ງຕ້ອງໄດ້ຮອງຮັບເອົາມາດຕະຖານສາກົນເຫຼົ່ານີ້ ແລະ ໄດ້ຮຽນຮູ້ຈາກຕົວຢ່າງທີ່ພົ້ນເດັ່ນກ່ຽວກັບບັນຫານີ້ໃນ ສປປ ລາວ. ບັນດາບໍລິສັດສາມາດເສີມສ້າງຄວາມສາມາດໃນການແຂ່ງຂັນໃນການເຂົ້າເຖິງແຫຼ່ງທຶນ ແລະ ຕະຫຼາດທີ່ພົ້ນເດັ່ນ, ສ້າງພາບລັກທີ່ດີ, ດຶງດູດ ແລະ ຮັກສາບຸກຄະລາກອນທີ່ມີຄວາມຫຼາກຫຼາຍ ແລະ ມີຄວາມສາມາດໄວ້ໄດ້ຈາກການປະຕິບັດຕາມມາດຕະຖານສາກົນເຫຼົ່ານີ້. ຫຼັກຖານຈາກທົ່ວໂລກໄດ້ສະແດງໃຫ້ເຫັນວ່າ 59% ຂອງບັນດາທຸລະກິດທີ່ມີຄວາມຮັບຜິດຊອບໃນທະວີບອາຊີ, ອາເມຣິກາ ແລະ ເອີຣົບສາມາດເພີ່ມລາຍຮັບຂຶ້ນໄດ້. ເຖິງຢ່າງໃດກໍ່ຕາມ ຜົນຂອງການສຳຫຼວດແຈ້ງໃຫ້ເຫັນວ່າ 62% ຂອງທຸລະກິດໃນ ສປປ ລາວຍັງບໍ່ທັນຮັບຮູ້ ຫຼື ຮັບຮູ້ພຽງໜ້ອຍດຽວກ່ຽວກັບມາດຕະຖານສາກົນໃນການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ແລະ ຍັງບໍ່ມີບໍລິສັດໃດເຮັດການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ.

ທ່ານ ນາງ ດາລີວັນ ຈັນທະພອນ, ຫົວໜ້າພະແນກກວດກາລາຍຮັບ ຂອງການບິນລາວໄດ້ໃຫ້ຄຳເຫັນວ່າ: "ປັດຈຸບັນພວກເຮົາຮັບຮູ້ແຕ່ ຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດ ທີ່ຫຼາຍໆບໍລິສັດໄດ້ຈັດຕັ້ງປະຕິບັດ. ໃນຕົວຈິງ, ການທີ່ບໍລິສັດເຮັດໄດ້ໃນວຽກງານການຮັບຜິດຊອບຕໍ່ສັງຄົມ ບໍ່ໄດ້ໝາຍຄວາມວ່າຈະກຳໄດ້ໃນຫຼັກການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ. ຕົວຢ່າງ, ບາງບໍລິສັດອາດຈະບໍລິຈາກເງິນແຕ່ກໍຍັງສ້າງມົນລະພິດໃຫ້ແກ່ແມ່ນ້ຳຂອງຢູ່. ການປັບປ່ຽນຈາກວຽກງານການຮັບຜິດຊອບຕໍ່ສັງຄົມໄປສູ່ ຫຼັກການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ຈະຊ່ວຍໃຫ້ທຸລະກິດໄດ້ຍົກສູງຄວາມທະເຍີທະຍານ ແລະ ເພີ່ມປະສິດທິພາບ ໂດຍທີ່ບໍ່ສ້າງຜົນກະທົບຕໍ່ການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ".

ຫຼັກການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບສາມາດເປັນຫົນທາງໃນການປ່ຽນແປງຢ່າງຍຸດຕິທຳໃຫ້ແກ່ບັນດາທຸລະກິດລາວໃນການຟື້ນຟູຈາກພະຍາດ ໂຄວິດ-19.

ທ່ານ ບຸນເກີດ ໄຊຍະສອນ, ຫົວໜ້າກົມກວດສອບ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ກ່າວວ່າ "ໃນສອງປີທີ່ຜ່ານມາ, ການລະບາດຂອງພະຍາດໂຄວິດ-19 ແມ່ນໄດ້ສ້າງຜົນກະທົບໃຫ້ແກ່ທຸລະກິດເກືອບທຸກຂະແໜງການໃນ ສປປ ລາວ. ໃນປັດຈະບັນ, ບໍລິສັດຕ່າງໆສາມາດນຳໃຊ້ຫຼັກການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ ໃນການ

ຟື້ນຟູຈາກວິກິດພະຍາດໂຄວິດ-19 ໃນໄວໆນີ້ ແລະ ມີສ່ວນຮ່ວມໃນການຟື້ນຟູເສດຖະກິດລາວທີ່ຍືນຍົງ. ລັດວິສາຫະກິດແມ່ນມີພາລະບົດບາດໃນການເປັນຜູ້ນຳ ແລະ ເປັນແບບຢ່າງໃນການປະຕິບັດຕາມມາດຕະຖານສາກົນເພື່ອການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບ”.

ສູນການເຝິກອົບຮົມເພື່ອການດຳເນີນທຸລະກິດຢ່າງມີຄວາມຮັບຜິດຊອບແບບເຄື່ອນທີ່ ແມ່ນກິດຈະກຳໜຶ່ງທີ່ຢູ່ພາຍໃຕ້ “ໂຄງການປັບປຸງປະສິດທະພາບ, ຄວາມຮັບຜິດຊອບ, ຫຼັກການປະຕິບັດ, ແລະ ຄວາມໂປ່ງໃສຂອງທຸລະກິດໃນ ສປປ ລາວ” ຫຼືວ່າ IMPACT Biz ຈັດຕັ້ງປະຕິບັດໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ ໂດຍການສະໜັບສະໜູນຂອງລັດຖະບານຍີ່ປຸ່ນ.

---

**ສຳຫຼັບຂໍ້ມູນເພີ່ມເຕີມ ຕິດຕໍ່ຫາ:**

ທ່ານ ນາງ ອັກສອນທິບ ສົມວໍລະຈິດ
ຫົວໜ້າໜ່ວຍງານການສື່ສານຂອງ UNDP
aksonethip.somvorachit@undp.org

ນາງ ສິນສະຫວັນ ສອນປະເສີດ
ພະນັກງານການສື່ສານ ແລະ ປະຊາສຳພັນສຳຫຼັບການປົກຄອງຂອງ UNDP
sinsavanh.sonepaseuth@undp.org